# ລາວ ສ້າງບຸກຄະລາກອນ ກ່ຽວກັບຕະຫລາດຫລັກຊັບ

ສຳມະນາກອນຈາກພາກລັດ-ເອກະຊົນ 87 ໄດ້ສຳເລັດການເຂົ້າຮ່ວມສຳມະນາໂຄງການວິຊາຊີບທາງດ້ານທຸລະກິດຫລັກຊັບຊຸດທີ I ຢູ່ສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ ໂດຍຕະຫລາດຫລັກຊັບ ແຫ່ງ ສປປ ລາວ (ຄຕລ) ແລະ ຕະຫລາດຫລັກຊັບ ແຫ່ງ ປະເທດໄທ ຮ່ວມກັນຈັດຂຶ້ນ ແຕ່ວັນທີ 10/07-02/08 ຜ່ານມານີ້ ແລະ ໄດ້ມີພິທີມອບ-ຮັບໃບ ປະກາສະນີຍະບັດ ໃຫ້ແກ່ສຳມະນາກອນດັ່ງກ່າວ ໃນວັນທີ 22 ທັນວານີ້ ຢູ່ໂຮງແຮມລ້ານຊ້າງ ນະຄອນຫລວງວຽງຈັນ ໂດຍທ່ານ ພູເພັດ ຄຳພູນວົງ ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ.

ທ່ານ ເດດພູວັງ ມູລຣັຕນ໌ ຮັກສາການຫົວໜ້າສຳນັກງານ ຄຕລ ໄດ້ແຈ້ງໃຫ້ຮູ້ເມື່ອບໍ່ດົນມານີ້ວ່າ: ໃນໄລຍະ 10 ກວ່າມື້ ຂອງການສຳມະນາດັ່ງກ່າວ, ສຳມະນາກອນໄດ້ຮຽນຮູ້ລົງເລິກທາງດ້ານທິດສະດີຄືເຄື່ອງມື ເພື່ອການວິເຄາະໃນການລົງທຶນ, ວິເຄາະຂໍ້ມູນການລົງທຶນ, ການຄຸ້ມຄອງຕະຫລາດການເງິນ, ຄວາມຮູ້ເບື້ອງຕົ້ນກ່ຽວກັບຮຸ້ນ, ຄວາມຮູ້ເບື້ອງຕົ້ນກ່ຽວກັບພັນທະບັດ, ການບໍລິການກຸ່ມຫລັກຊັບ, ຈັນຍາບັນ ແລະ ມາດຕະຖານການປະຕິບັດໜ້າທີ່ຂອງຜູ້ຕິດຕໍ່ກັບລູກຄ້າ. ນອກນີ້, ສຳມະນາກອນຍັງໄດ້ຮຽນຮູ້ກົດໝາຍ-ກົດລະບຽບຕ່າງໆ ທີ່ກ່ຽວຂ້ອງກັບທຸລະກິດຫລັກຊັບຄືກົດໝາຍວິສາຫະກິດ, ການບັນຊີ, ກົດໝາຍ ວ່າດ້ວຍການລົ້ມລະລາຍຂອງວິສາຫະກິດ ແລະກົດໝາຍ ວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ລວມເຖິງດຳລັດ ວ່າດ້ວຍຕ້ານການຟອກເງິນ, ດຳລັດ ວ່າດ້ວຍຫລັກຊັບ ແລະ ຕະຫລາດຫລັກຊັບ ແລະ ລະບຽບ ວ່າດ້ວຍການອອກຫລັກຊັບຂອງວິສາຫະກິດ ລວມທັງໄດ້ຮຽນຮູ້ພຶດຕິກຳຕົວຈິງໃນການບໍລິການຕ່າງໆຂອງບໍລິສັດຫລັກຊັບໂດຍໄດ້ໄປທັດສະນະສຶກສາຢູ່ບໍລິສັດຫລັກຊັບ 2 ແຫ່ງ ແລະ ຕະຫລາດຫລັກຊັບ ແຫ່ງ ປະເທດໄທ.

ສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ ແລະ ຕະຫລາດຫລັກຊັບ ແຫ່ງ ສປປ ລາວແລະ ຕະຫລາດຫລັກຊັບ ແຫ່ງ ປະເທດໄທ ຈະໄດ້ຮ່ວມກັນຈັດສຳມະນາໃຫ້ແກ່ນັກການຕະຫລາດຂັ້ນຕົ້ນອີກຊຸດທີ II ໃນເດືອນ ກຸມພາ ແລະ ຈັດສຳມະນາໃຫ້ແກ່ນັກວິເຄາະຫລັກຊັບ ຊຸດທີ I ໃນເດືອນ ມິຖຸນາ 2010.